ການເຊັນສັນຍາຮ່ວມມື
ລະຫວ່າງ ບໍລິສັດ ຊິມັງລາວ ມະຫາຊົນ
ແລະ ກຸ່ມບໍລິສັດ ສະຖາບັນການອອກແບບແຂວງຢຸນນານ ຈຳກັດ

ວັນທີ 29 ທັນວາ 2022 ບໍລິສັດ ຊິມັງລາວ ມະຫາຊົນ ແລະ ກຸ່ມບໍລິສັດ ສະຖາບັນການອອກແບບແຂວງຢຸນນານ ຈຳກັດໄດ້ເຊັນສັນຍາການຮ່ວມມື, ມີຈຸດປະສົງເພື່ອສ້າງແຜນການໂດຍລວມໃຫ້ແກ່ບໍລິສັດ ຊິມັງລາວ ມະຫາຊົນໃນການກໍ່ສ້າງເຂດສາທິດເສດຖະກິດດ້ານອຸດສາຫະກຳການທ່ອງທ່ຽວເມືອງວັງວຽງ.



ທ່ານ ເນ້ຍເຫຼີຍ ຜູ້ອຳນວຍການໃຫຍ່ຂອງບໍລິສັດ ຊິມັງລາວ ມະຫາຊົນ ພ້ອມດ້ວຍຄະນະອຳນວຍການຂອງບໍລິສັດ ທ່ານ ວິຈິດ ສຸວັນນະລາດ, ທ່ານ ຫູຍລິນ, ທ່ານ ຈ່າງຈິງຫວາ, ທ່ານ ເຊ້ຍລຽງວູ, ທ່ານ ວາງສີ ແລະ ທ່ານ ວາງຮອງເວີຍ ຜູ້ຊ່ວຍວຽກປະທານສະພາບໍລິຫານຂອງກຸ່ມບໍລິສັດ ສະຖາບັນການອອກແບບແຂວງຢຸນນານ ຈຳກັດ, ຫົວໜ້າຂອງພະແນກຮັບເໝົາທຸລະກິດ, ທ່ານ ມູ້ສິນຢູ ເລຂາຂອງບໍລິສັດ ຄວບ ຄຸມຊັບສິນຫົ່ງຢວນ ກຸ່ມບໍລິສັດ ສະຖາບັນການອອກແບບແຂວງຢຸນນານ ຈຳກັດ, ທ່ານ ຄ່າງສືຈວນ ວິສະວະກອນໃຫຍ່ຂອງພະແນກຮັບເໝົາທຸລະກິດ, ທ່ານ ຫຼີຕາ ຜູ້ຮັບຜິດຊອບຂອງກຸ່ມບໍລິສັດ ສະຖາບັນການອອກແບບແຂວງຢຸນນານ ຈຳກັດ ປະຈຳການຢູ່ ສປປ ລາວ, ທ່ານ ຈ່າງລຸຍ ຫົວໜ້າໂຄງການ, ທ່ານ ຜິງຢານໂຕ່ງ ຫົວໜ້າໂຄງການ ໄດ້ເຂົ້າຮ່ວມພິທີເຊັນສັນຍາການຮ່ວມມືກັນໃນຄັ້ງນີ້.



ທັງສອງຝ່າຍຈະສຸມໃສ່ໃນການວາງແຜນ ແລະ ພັດທະນາການທ່ອງທ່ຽວໂດຍລວມຢູ່ປະເທດລາວ ບົນຫຼັກການຕ່າງຝ່າຍຕ່າງມີຜົນປະໂຫຍດ, ການຮ່ວມມືກັນຢ່າງສີ່ສັດບໍລິສຸດ, ການຮ່ວມມືພ້ອມກັນ, ຮ່ວມກັນພັດທະນາກໍ່ສ້າງເຂດສາທິດເສດຖະກິດດ້ານອຸດສາຫະກຳການທ່ອງທ່ຽວເມືອງວັງວຽງ. ໂຄງການດັ່ງກ່າວລວມມີການກໍ່ສ້າງຫໍພິພິທະພັນອຸດສາຫະກຳ, ເມືອງບູຮານລ້ານຊ້າງ, ສູນປົກປັກຮັກສາສັດ-ພືດແຫ່ງຊາດລາວ, ສະໜາມການສະແດງສີລະປະຊົນເຜົ່າຂະໜາດໃຫຍ່, ສວນປົກປັກຮັກສາຊ້າງ, ໂຮງຮຽນທ່ອງທ່ຽວ ແລະ ວັດທະນະທຳລາວ, ຖະໜົນອາຫານພິເສດຂອງອາຊີອາຄະເນ ແລະ ໂຄງການອື່ນໆ. ການກໍ່ສ້າງເຂດສາທິດດັ່ງກ່າວໃຫ້ສຳເລັດມີຄວາມໝາຍສຳຄັນຕໍ່ການພັດທະນາຂະແໜງການທ່ອງທ່ຽວຢູ່ປະເທດລາວ.

